# ການຝຶກອົບຮົມເບື້ອງຕົ້ນກ່ຽວກັບການຄຸ້ມຄອງຊັບສິນພື້ນຖານໂຄ່ງລ່າງ ໃຫ້ແກ່ພະນັກງານລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນ ສປປ ລາວ

ພາຍໃຕ້ການຮ່ວມມືຂອງ ກະຊວງພາຍໃນ (MoHA) ຮ່ວມກັບ ອົງການ UNDESA, UNCDF ແລະ UNOPS

ກອງປະຊຸມແບບສົມປະສານ, ຈັດຂຶ້ນໃນວັນທີ 27-28 ມີນາ 2023, ເວລາ 8:00 – 12:15 (ຕອນເຊົ້າ ຕາມເວລາທ້ອງຖິ່ນ) ແລະ 9:00 – 12:30 (ຕອນແລງ ຕາມເວລາຕ່າງປະເທດ)

ທີ່ໂຮງແຮມ ອາມາຣີ, ວັງວຽງ, ແຂວງວຽງຈັນ, ສປປ ລາວ

ຈຸດປະສົງຫຼັກຂອງກອງປະຊຸມໃນຄັ້ງນີ້ແມ່ນເພື່ອເພີ່ມທະວີຄວາມອາດສາມາດໃຫ້ແກ່ພະນັກງານລັດຂັ້ນສູນກາງ ແລະ ທ້ອງຖິ່ນ ໃນ ສປປ ລາວ ໃນການຈັດຕັ້ງປະຕິບັດຄູ່ມືສໍາລັບຊຸດເຄື່ອງມືການຄຸ້ມຄອງຊັບສິນພື້ນຖານໂຄງລ່າງ (ປຶ້ມຄູ່ມືຂອງອົງການສະຫະປະຊາຊາດ ກ່ຽວກັບການຄຸ້ມຄອງຊັບສິນພື້ນຖານໂຄງລ່າງ) ໃນການສະໜັບສະໜູນການພັດທະນາແບບຍືນຍົງ. ກອງປະຊຸມໃນຄັ້ງນີ້ຕົ້ນຕໍແມ່ນແນໃສ່ບັນດາພະນັກງານລັດຂັ້ນສູນກາງ ແລະ ທ້ອງຖິ່ນໃນບັນດາຕົວເມືອງ ຫຼື ນະຄອນຕ່າງໆໃນ ສປປ ລາວ ທີ່ຕິດພັນ ຫຼື ມີສ່ວນຮ່ວມໃນການຄຸ້ມຄອງຊັບສິນພື້ນຖານໂຄງລ່າງ.

ກອງປະຊຸມຄັ້ງນີ້ແມ່ນສ່ວນໜຶ່ງຂອງ "ຂໍ້ລິເລີ່ມການພັດທະນາຄວາມອາດສາມາດຂອງອົງການສະຫະປະຊາຊາດ ກ່ຽວກັບການເພີ່ມທະວີຄວາມທົນທານ, ຄວາມສາມາດໃນການເຂົ້າເຖິງ, ແລະ ຄວາມຍືນຍົງຂອງຊັບສິນພື້ນຖານໂຄງລ່າງ ໃນບັນດາປະເທດກໍາລັງພັດທະນາ ເພື່ອສະໜັບສະໜູນວາລະ 2030." ໂຄງການດັ່ງກ່າວໄດ້ຮັບການຈັດຕັ້ງປະຕິບັດຮ່ວມກັນໂດຍ ອົງການ UNDESA, UNCDF ແລະ UNOPS ແລະ ມີຈຸດປະສົງເພື່ອແກ້ໄຂບັນຫາການຂາດຄວາມຍືນຍົງ ແລະ ຄວາມເປັນລະບົບທາງດ້ານຍຸດທະສາດ, ນະໂຍບາຍ ແລະ ພາກປະຕິບັດຂອງພາກລັດຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຮັບປະກັນໃຫ້ຊັບສິນພື້ນຖານໂຄງລ່າງສາມາດສະໜັບສະໜູນການບໍລິການສາທາລະນະໂດຍລວມໄດ້ ແລະ ມີຄວາມຍືນຍົງຕະຫຼອດຊ່ວງອາຍຸການໃຊ້ງານຂອງຊັບສິນດັ່ງກ່າວ. ໂຄງການດັ່ງກ່າວນີ້ລວມມີການຈັດຝຶກອົບຮົມໃຫ້ແກ່ພະນັກງານລັດຂັ້ນສູນກາງ ແລະ

ທ້ອງຖິ່ນໃນປະເທດທີ່ໄດ້ຮັບຜົນປະໂຫຍດໃນການອອກແບບ, ຈັດຕັ້ງປະຕິບັດ, ຕິດຕາມ ແລະ ທົບທວນໄວ້ລ່ວງໜ້າ, ການຮັບຮູ້ຄວາມສ່ຽງ, ແລະ ການວິເຄາະຂໍ້ມູນຕົວເລກ ໃນການຄຸ້ມຄອງຊັບສິນພື້ນຖານໂຄງລ່າງທາງດ້ານຍຸດທະສາດ, ນະໂຍບາຍ ແລະ ແຜນການຈັດຕັ້ງປະຕິບັດ ເພື່ອການສະໜັບສະໜູນການບໍລິການສາທາລະນະຂັ້ນພື້ນຖານ ໂດຍທີ່ບໍ່ປະຖິ້ມໃຜໄວ້ທາງຫຼັງ.

ໂຄງການດັ່ງກ່າວຍັງມີຈຸດປະສົງໃນການສ້າງຄວາມອາດສາມາດໃຫ້ແກ່ຂັ້ນສູນກາງ ກ່ຽວກັບວິທີການອອກແບບ ແລະ ຈັດຕັ້ງປະຕິບັດບັນດານະໂຍບາຍ, ລະບຽບການ ແລະ ກອບກົດໝາຍແຫ່ງຊາດທີ່ໄດ້ຮັບການຮັບຮອງ ເພື່ອສະໜັບສະໜູນການຄຸ້ມຄອງຊັບສິນພື້ນຖານໂຄງລ່າງໃນຂັ້ນທ້ອງຖິ່ນ ແລະ ແຫ່ງຊາດ. ບັນດາພາກສ່ວນທີ່ກ່ຽວຂ້ອງຕົ້ນຕໍ ລວມມີ ພະນັກງານລັດຂັ້ນທ້ອງຖິ່ນ ແລະ ຂັ້ນສູນກາງຈາກບັນດາກະຊວງຕ່າງໆ ລວມເຖິງພາກສ່ວນດ້ານສັງຄົມ ແລະ ພາກເອກະຊົນ.

ວາລະໃນເບື້ອງຕົ້ນ (ຕາມເວລາທ້ອງຖິ່ນ - ສປປ ລາວ):

## ມື້ທີ 1: ວັນຈັນ, 27 ມິນາ 2023, 8:00 (ຕອນເຊົ້າ) – 12:15 (ຕອນບ່າຍ)

| | |
|---|---|
| 08:00-08:30 | **ຜູ້ເຂົ້າຮ່ວມ ລົງທະບຽນ ແລະ ສຳເລັດການຕື່ມແບບຟອມການປະເມີນເບື້ອງຕົ້ນ** |
| 8:30 – 9:00 | **ກ່າວຕ້ອນຮັບ ແລະ ແນະນຳໂຄງການ:**<br><br>ກ່າວເປີດງານໂດຍ ທ່ານ. ນິສິດ ແກ້ວບັນຍາ, ຮອງລັດຖະມົນຕີ ກະຊວງພາຍໃນ<br><br>ກ່າວມີຄຳເຫັນໂດຍ Mr. Paul Martin, Regional Team Leader for UNCDF's Local Development Finance Practice based in Bangkok, Thailand<br><br>ກ່າວມີຄຳເຫັນໂດຍ Mrs. Caroline Spigelski, Country Office Representative and Infrastructure Project Manager, UN Office for Project Services (UNOPS)<br><br>ກ່າວມີຄຳເຫັນໂດຍ Mr. Daniel Platz, Senior Economic Affairs Officer, Project Lead for Infrastructure Asset Management, Financing for Sustainable Development Office, UN DESA |
| 09:00-09:15 | **ຖ່າຍຮູບລວມ** (**ຜູ້ເຂົ້າຮ່ວມທຸກທ່ານ**) |
| **ຫົວຂໍ້ທີ 1: ການຄຸ້ມຄອງຊັບສິນຂັ້ນພື້ນຖານ**<br><br>**ນຳສະເໜີໂດຍ:** Dr. Linda Newton, Senior Expert Consultant, UN DESA<br>*(ແບບອອນລາຍ)* | |
| 09:15–10:15 | **ພາກທີ 1: ແນວຄວາມຄິດເບື້ອງຕົ້ນ ກ່ຽວກັບການຄຸ້ມຄອງຊັບສິນພື້ນຖານໂຄງລ່າງ (IAM)**<br><br>- ພື້ນຖານການຄຸ້ມຄອງຊັບສິນ ແລະ ແນວຄວາມຄິດຕົ້ນຕໍ<br>- ພາບລວມ<br>- ວົງຈອນການຄຸ້ມຄອງຊັບສິນພື້ນຖານໂຄງລ່າງ (IAM)<br>- ບັນດາເສົາຄ້ຳຂອງການຄຸ້ມຄອງຊັບສິນພື້ນຖານໂຄງລ່າງ (IAM)<br>- ຄຳຖາມຫຼັກໆທີ່ເກີດຂຶ້ນ |
| 10:15-10:30 | **ພັກຜ່ອນ / Coffee Break** |

| | |
|---|---|
| 10:30–11:15 | **ພາກທີ 2: ວົງຈອນການຄຸ້ມຄອງຊັບສິນພື້ນຖານໂຄງລ່າງ (ແຜນການ, ສິ່ງທີ່ໄດ້ຮັບ)**<br>- ການຄຸ້ມຄອງຄວາມຕ້ອງການ<br>- ບັນດາລະບຽບການ<br>- ລະດັບຂອງການບໍລິການ<br>- ການຄຸ້ມຄອງວົງຈອນການໃຊ້ງານ<br>- ບັນດາຄວາມສ່ຽງ<br>- ການວາງແຜນດ້ານທຶນ<br>- ການຄຸ້ມຄອງທາງດ້ານການເງິນ<br>- ການພິຈາລະນາ |
| 11:15–11:45 | **ພາກທີ 3: ວົງຈອນການນຳໃຊ້ຊັບສິນພື້ນຖານໂຄງລ່າງ (ການນຳໃຊ້ ແລະ ການຈັດການ)**<br>- 6 What ພື້ນຖານຂອງ IAM<br>- ການພິຈາລະນາການນຳໃຊ້<br>- Word cloud<br>- ອາຍຸຂອງການບໍລິການ<br>- ການທົບທວນຄືນ LOS<br>- ການປະເມີນ, ວັດແທກ ແລະ ຕິດຕາມຊັບສິນ<br>- ການຄຸ້ມຄອງວົງຈອນອາຍຸການໃຊ້ງານ<br>- ການຄຸ້ມຄອງທາງດ້ານການເງິນ<br>- ການພິຈາລະນາການຈັດເກັບ/ຖິ້ມ/ທຳລາຍ<br>- ຂໍ້ມູນຂອງ IAM<br>- ການລົງທະບຽນຊັບສິນ |
| 11:45-12:15 | **ຖາມ-ຕອບ ລະຫວ່າງ Dr. Linda Newton ແລະ ຜູ້ເຂົ້າຮ່ວມ** |
| 12:15-12:30 | **ແຈກຢາຍບົດຝຶກຫັດສຳລັບໃຫ້ເຮັດໃນຊ່ວງຕອນບ່າຍ** |
| 12:30 | **ສິ້ນສຸດສຳລັບມື້ທີ 1** |

## ມື້ທີ 2: ວັນອັງຄານ, 28 ມີນາ 2023, 08:30 (ຕອນເຊົ້າ) - 12:30 (ຕອນບ່າຍ)

| | |
|---|---|
| 08:30-09:00 | **ຜູ້ເຂົ້າຮ່ວມລົງທະບຽນ** |

| | |
|---|---|
| **09:00 – 09:20** | **ຕ້ອນຮັບ ແລະ ແນະນຳ:**<br><br>ກ່າວມີຄຳເຫັນໂດຍ Mr. Paul Martin, Regional Team Leader for UNCDF's Local Development Finance Practice based in Bangkok, Thailand<br><br>ກ່າວມີຄຳເຫັນໂດຍ Mr. Thilaphong Oudomsine, Senior Programme Specialist, UNCDF<br><br>ແນະນຳໂດຍລວມກ່ຽວກັບຮູບແບບການຝຶກອົບຮົມໂດຍ Ms. Phetanong Mounlamay, National Consultant |
| **09:20–10:00** | **ຫົວຂໍ້ທີ 2: ການປ່ຽນແປງດິນຟ້າອາກາດ ແລະ ການຄຸ້ມຄອງຊັບສິນ** (**Climate Change and Asset Management** *(ແບບສາຍພາບບັນທຶກລ່ວງໜ້າ)*<br><br>- ຄວາມຄຸ້ນເຄີຍກັບການປ່ຽນແປງດິນຟ້າອາກາດ, ການຫຼຸດຜ່ອນໄພພິບັດ<br>- ການປຽບທຽບໃສ່ສາກົນ<br>- ສ້າງຄວາມທົນທານຕ້ານໄພພິບັດ<br>- ເຊື່ອມຕໍ່ກັບການຫຼຸດຜ່ອນຄວາມສ່ຽງໄພພິບັດ<br>- ການເຊື່ອມຕໍ່ລະຫວ່າງການຫຼຸດຜ່ອນຄວາມສ່ຽງໄພພິບັດ ແລະ ວົງຈອນຂອງ IAM<br>- ການປັບປຸງການຄຸ້ມຄອງນ້ຳທີ່ເກີດຈາກພາຍຸ<br>- ການຈັດການທີ່ເກີດຈາກບັນຫາຝົນຕົກໜັກໃນ ສປປ ລາວ<br>- ພາບລວມການປ່ຽນແປງດິນຟ້າອາດຂອງ ສປປ ລາວ<br>- ຂົວ 6 ແບບ<br>- ກິດຈະກຳສ້າງຄວາມທົນທານອື່ນໆ<br>- ຂັ້ນຕອນຕໍ່ໄປ<br><br>**ນຳສະເໜີໂດຍ:** Mr. Dustin Carey, Capacity Building Officer with the Federation of Canadian Municipalities and UN DESA Expert Consultant |
| **10:00–10:15** | **ພັກຜ່ອນ** / **Coffee Break** |
| **10:15 – 11:55** | **ຫົວຂໍ້ທີ 3: ຂໍ້ມູນຊັບສິນ** *(ແບບອອນລາຍ)*<br><br>- ຄວາມສຳຄັນຂອງຂໍ້ມູນຊັບສິນ<br>- 6 W ຂອງຂໍ້ມູນ<br>- ແບບສຳຫຼວດ IAMS<br>- ຄຳຖາມກ່ຽວກັບ IAMS<br>- ທ່ານພົບພໍ້ບັນຫາໃດກ່ຽວກັບຂໍ້ມູນຊັບສິນຂອງທ່ານ? – ຄຸນນະພາບຂອງຂໍ້ມູນ<br>- ຜົນກະທົບຂອງຂໍ້ມູນທີ່ບໍ່ມີຄຸນນະພາບ |

| | |
|---|---|
| | - ພື້ນຖານຂອງການຕັ້ງລະບົບຂໍ້ມູນຊັບສິນ<br>- 7 ຂັ້ນຕອນກ່ຽວກັບວິທີການ<br>ຂັ້ນຕອນທີ 1: ການສ້າງທີມງານ AIS<br>ຂັ້ນຕອນທີ 2: ການລົງທະບຽນຊັບສິນ ແລະ ການຈັດລະດັບ<br>ຂັ້ນຕອນທີ 3: ການວາງແຜນການຈັດເກັບຂໍ້ມູນ, ການສໍາຫຼວດສອບຖາມ – ການເກັບກໍາຂໍ້ມູນ<br>ຂັ້ນຕອນທີ 4: ເກັບກໍາຂໍ້ມູນ<br>ຂັ້ນຕອນທີ 5: ການກວດສອບຂໍ້ມູນ<br>ຂັ້ນຕອນທີ 6: ການຄຸ້ມຄອງຂໍ້ມູນ<br>ຂັ້ນຕອນທີ 7: ການທົບທວນ, ຮັກສາ ແລະ ປັບປຸງ<br><br>**ນໍາສະເໜີໂດຍ:** Prof. Ajith Kumar Parlikad, Head of Asset Management Group, University of Cambridge and UN DESA Expert Consultant |
| **11:55-12:15** | **ປຶກສາຫາລື / ຖາມ-ຕອບ** |
| **12:15 – 1:00** | **ການສະຫຼຸບຄືນໂດຍຫຍໍ້ກ່ຽວກັບການຈັດຝຶກອົບຮົມ ແລະ ກ່າວປິດຢ່າງເປັນທາງການ**:<br><br>ສໍາເລັດການຕື່ມແບບຟອມປະເມີນພາຍຫຼັງຝຶກອົບຮົມ<br><br>ກ່າວສະຫຼຸບ ແລະ ມີຄໍາເຫັນໂດຍຫຍໍ້ກ່ຽວກັບການຝຶກອົບຮົມໂດຍ Mr. Daniel Platz, Senior Economic Affairs Officer, Financing for Sustainable Development Office, UN DESA<br><br>ກ່າວປິດຢ່າງເປັນທາງການໂດຍ ທ່ານ. ນິສິດ ແກ້ວບັນຍາ, ຮອງລັດຖະມົນຕີ ກະຊວງພາໃນ |